ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

------===00===------

ລັດວິສາຫະກິດ ໂທລະຄົມລາວ

ເລກທີ່ 1609 /ລທລ

ວັນທີ່ 03 MAY 2005

# ຂໍ້ກຳນົດ

## ຂອງລັດວິສາຫະກິດ ໂທລະຄົມລາວ

## ວ່າດ້ວຍ ສິດ, ໜ້າທີ່ ແລະ ເງິນເດືອນ ຂອງພະນັກງານ ສັນຍາຈ້າງ.

- ອີງຕາມ ຂໍ້ກຳນົດ ຂອງ ລັດວິສາຫະກິດໂທລະຄົມລາວ ວ່າດ້ວຍການຄຸ້ມຄອງແຮງງານ ແລະ ສະຫວັດດີການ ຂອງພະນັກງານ ສະບັບເລກທີ່ 1507 / ລທລ, ລົງວັນທີ 16 /06/ 2004.
- ເພື່ອເຮັດໃຫ້ການຄຸ້ມຄອງແຮງງານ ແລະ ສະຫວັດດີການ ຂອງພະນັກງານ ສັນຍາຈ້າງ ລທລ ໃຫ້ໄດ້ດີ ແລະ ມີຄວາມເປັນເອກະພາບ ທາງດ້ານ ລະບຽບ ຫຼັກການ ໃນການປະຕິບັດນະໂຍບາຍ ຂອງ ລທລ.

ຜູ້ອຳນວຍການໃຫຍ່ ລທລ ໄດ້ອອກຂໍ້ກຳນົດ ວ່າດ້ວຍ ການກຳນົດຊັ້ນ, ຂັ້ນ ເງິນເດືອນ ຂອງ ພະນັກງານ ສັນຍາຈ້າງ ຂອງ ລັດວິສາຫະກິດໂທລະຄົມລາວ ດັ່ງລຸ່ມນີ້:

## ໝວດທີ່ I

## ວ່າດ້ວຍສິດ ແລະ ໜ້າທີ່ ຂອງພະນັກງານ ສັນຍາຈ້າງ.

**ມາດຕາ 1:** **ຄຳນິຍາມ:**

ພະນັກງານ ສັນຍາຈ້າງ ແມ່ນຜູ້ອອກແຮງງານ ທີ່ມີສັນຍາແຮງງານ ກັບ ລັດວິສາຫະກິດ ໂທລະຄົມລາວ ໂດຍບໍ່ມີກຳນົດ ທີ່ແນ່ນອນ, ເຊັ່ນ: ແມ່ບ້ານ, ຄົນສວນ.

**ມາດຕາ 2:** **ສິດ ແລະ ໜ້າທີ່ ຂອງພະນັກງານ ສັນຍາຈ້າງ:**

2.1 ສິດ:

+ ພະນັກງານ ສັນຍາຈ້າງ ມີສິດ ໄດ້ຮັບນະໂຍບາຍ ແລະ ສະຫວັດດີການ ສັງຄົມ ຈາກ ລທລ ຄືກັນກັບ ພະນັກງານຖາວອນ ເຊັ່ນ: ຄ່າຈ້າງແຮງານ, ການລາພັກເຈັບ, ລາພັກປະຈຳປີ, ລາພັກທຸລະກິດ, ເກີດລູກ,ໄດ້ຮັບເຄື່ອງແບບ, ເຄື່ອງອອກແຮງງານ, ເງິນບຳເນັດ, ເງິນບໍ່ ພັກການ ເງິນຍ້ອງຍໍ ແລະ ອື່ນໆ ຕາມຂໍກຳນົດ ວ່າດ້ວຍການຄຸ້ມຄອງແຮງງານ ແລະສະວັດດີການ.

+ ພະນັກງານ ສັນຍາຈ້າງ ມີສິດຍົກເລີກສັນຍາແຮງງານ ກັບ ລທລ ໄດ້ ໃນເມື່ອ ຜູ້ກ່ຽວ ບໍ່ຕ້ອງການ ເຮັດວຽກ ຢູ່ນຳ ລທລ ຕໍ່ໄປ ແລະ ຕ້ອງແຈ້ງໃຫ້ ລທລ ຊາບກ່ອນ ຢ່າງໜ້ອຍ 15 ວັນ.

2.2 <u>ໜ້າທີ່:</u>

+ ພະນັກງານ ສັນຍາຈ້າງ ມີໜ້າທີ່ອອກແຮງງານ ຫຼືເຮັດວຽກໃຫ້ ລທລ ຕາມໜ້າວຽກ ທີ່ໄດ້ສັນຍາ ກັບ ລັດວິສາຫະກິດໂທລະຄົມລາວ ດ້ວຍຄວາມຮັບຜິດຊອບສູງ ແລະ ຜົນຂອງວຽກ ທີ່ປະຕິບັດນັ້ນ ຕ້ອງໄດ້ຕາມລະດັບຄາດໝາຍ ຂອງ ລທລ ວາງໄວ້.

+ ພະນັກງານ ສັນຍາຈ້າງ ມີໜ້າ ປະຕິບັດ ຕາມຂໍ້ກຳນົດ ກົດລະບຽບ ຂອງ ລທລ ວາງອອກ ແລະ ປະຕິບັດ ມະຕິ ຄຳສັ່ງ ຂອງຂັ້ນເທິງ ຄືກັນກັບ ພະນັກງານ ຖາວອນ ຂອງ ລທລ.

## ໝວດທີ່ II

## ວ່າດ້ວຍ ເງິນເດືອນ ຂອງພະນັກງານ ສັນຍາຈ້າງ.

ມາດຕາ 3: **ການກຳນົດ ເງິນເດືອນ ຂອງພະນັກງານ ສັນຍາຈ້າງ:**

ລທລ ໄດ້ກຳນົດ ການຄິດໄລ່ ເງິນເດືອນ ໃຫ້ ພະນັກງານ ສັນຍາຈ້າງ ຕາມ ຊັ້ນ, ຂັ້ນ, ດັດສະນີ ແລະ ຕົວຄູນດັດສະນີ ດັ່ງລຸ່ມນີ້:

+ ຊັ້ນ: ແມ່ນຈັດເຂົ້າ ຊັ້ນ 1 ( ຊັ້ນຕ່ຳສຸດ ຂອງ ພະນັກງານ ລທລ ).

+ ຂັ້ນ: ແມ່ນຈັດເຂົ້າ ຂັ້ນ 1 ( ຂັ້ນຕ່ຳສຸດ ຂອງ ພະນັກງານ ລທລ ).

+ ດັດສະນີ: ເທົ່າກັບ 135 ( ດັດສະນີ ຕ່ຳສຸດ ຂອງ ພະນັກງານ ລທລ ).

+ ຕົວຄູນດັດສະນີ: ແມ່ນເທົ່າກັບ 2.300 ກີບ ( ສອງພັນ ສາມຮ້ອຍ ຖ້ວນ ).

ມາດຕາ 4: **ແບບຕັ້ງ ຄິດໄລ່ເງິນເດືອນ ຂອງ ພະນັກງານ ສັນຍາຈ້າງ:**

$$S = ( D \times \eta ) \times 2$$

ໃນນັ້ນ: **S** = ເງິນເດືອນ, **D** = ດັດສະນີ, $\eta$ = ຕົວຄູນດັດສະນີ ແລະ **2** = ຕົວຄູນ.

ມາດຕາ 5: **ການເບີກຈ່າຍ ເງິນເດືອນ ແລະ ຄ່າ ແຮງງານ ພະນັກງານ ສັນຍາຈ້າງ:**

ລທລ ເບີກຈ່າຍ ເງິນເດືອນ ແລະ ຄ່າ ແຮງງານ ໃຫ້ ພະນັກງານ ສັນຍາຈ້າງ ເດືອນລະຄັ້ງ ( ວັນທີ 10 ຫາ 15 ຂອງແຕ່ລະເດືອນ ) ໂດຍເບີກຈ່າຍ ພ້ອມກັບ ພະນັກງານຖາວອນ ຂອງ ລທລ.

ມາດຕາ 6: **ເງິນເດືອນ ຂອງພະນັກງານ ສັນຍາຈ້າງ ໃນໄລຍະທົດສອບ:**

ພະນັກງານ ສັນຍາຈ້າງ ຂອງ ລັດວິສາຫະກິດໂທລະຄົມລາວ ທີ່ຢູ່ໃນໄລຍະ ທົດສອບ 1

ເດືອນ ທຳອິດ ຈະໄດ້ຮັບ ເງິນເດືອນ ແລະ ຄ່າແຮງງານ ເທົ່າກັບ 90% ຂອງເງິນເດືອນລວມຍອດໃນເດືອນ.

ເດືອນ ທີ 2 ຖ້າຫາກພະນັກງານ ສັນຍາຈ້າງ ເຮັດວຽກໄດ້ດີ ມີປະສິດຜົນສູງ ລທລ ຈະຈ່າຍເງິນເດືອນ ໃຫ້ 100% ຂອງເງິນເດືອນລວມຍອດໃນເດືອນ.

## ໝວດທີ່ III

## ວ່າດ້ວຍ ການປັບປຸງເງິນເດືອນ ຂອງພະນັກງານ ສັນຍາຈ້າງ.

ມາດຕາ 7: **ການປັບປຸງ ເງິນເດືອນ ຂອງພະນັກງານ ສັນຍາຈ້າງ:**

ເງິນເດືອນ ຂອງພະນັກງານ ສັນຍາຈ້າງ ຂອງ ລັດວິສາຫະກິດໂທລະຄົມລາວ ຈະໄດ້ຮັບການປັບປຸງ ກໍ່ຕໍ່ ເມື່ອ ລທລ ຕົກລົງປັບປຸງ ລະບົບເງິນເດືອນ ຂອງ ພະນັກງານ ຖາວອນ ລທລ.

## ໝວດທີ່ IV

## ບົດບັນຍັດສຸດທ້າຍ

ມາດຕາ 8: ລທລ ແລະ ພະນັກງານ ສັນຍາຈ້າງທຸກຄົນ ຕ້ອງເຄົາລົບ ແລະ ປະຕິບັດຕາມຂໍ້ກຳນົດສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 9: ຂໍ້ກຳນົດ ສະບັບນີ້ ມີຜົນບັງຄັບໃຊ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຜູ້ອຳນວຍການໃຫຍ່

ລັດວິສາຫະກິດ ໂທລະຄົມລາວ

Enterprise of Telecommunications LAO

ນະຄອນຫລວງວຽງຈັນ

ປະດັບເພັດ ໄຊຍະໂດດ